ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 184/ລບ
ນະຄອນຫຼວງວຽງຈັນ, ວັນທີ 10.03.2021

# ດຳລັດ
# ວ່າດ້ວຍ ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 06 ທັນວາ 2018;
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 44/ສພຊ, ລົງວັນທີ 14 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 43/ພນ, ລົງວັນທີ 04 ກຸມພາ 2021.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ

ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ແມ່ນການຕົກລົງລະຫວ່າງ ແມ່ຍິງລາວ ກັບ ຜູ້ຊາຍຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຫຼື ລະຫວ່າງ ຜູ້ຊາຍລາວ ກັບ ແມ່ຍິງຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເພື່ອໃຊ້ຊີວິດຄູ່ຮ່ວມກັນໃນຖານະເປັນຜົວ-ເມຍ ດ້ວຍການຈົດທະບຽນການແຕ່ງດອງຢ່າງຖືກຕ້ອງຕາມກົດໝາຍ.

### ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຄົນຕ່າງປະເທດ ໝາຍເຖິງ ຄົນທີ່ຖືສັນຊາດອື່ນ;
2. ຄົນຕ່າງດ້າວ ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນແຕ່ເຂົ້າມາຕັ້ງຖິ່ນຖານ, ອາໄສ ຢູ່ ສປປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະ ລັດຖະບານຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ການຖືສັນຊາດຢ່າງເປັນທາງການຢູ່;
3. ຄົນບໍ່ມີສັນຊາດ ໝາຍເຖິງ ບຸກຄົນທີ່ບໍ່ມີເອກະສານຢັ້ງຢືນວ່າເປັນຄົນສັນຊາດໃດ ຊຶ່ງລັດຖະບານແຫ່ງ ສປປ ລາວ ອະນຸຍາດ ແລະ ຮັບຮອງໃຫ້ດໍາລົງຊີວິດ ຢູ່ ສປປ ລາວ;
4. ສໍານັກງານຜູ້ຕາງໜ້າ ສປປ ລາວ ປະຈໍາຢູ່ຕ່າງປະເທດ ໝາຍເຖິງ ສໍານັກງານຜູ້ຕາງໜ້າການທູດ ແລະ ສໍານັກງານຜູ້ຕາງໜ້າກົງສຸນ.

### ມາດຕາ 4 ຫຼັກການກ່ຽວກັບການແຕ່ງດອງ

ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ລັດຖະທໍາມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງ ສປປ ລາວ ແລະ ກົດໝາຍຂອງປະເທດທີ່ກ່ຽວຂ້ອງ;
2. ຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ໂປ່ງໃສ ແລະ ບໍລິການວ່ອງໄວ;
3. ຮັບປະກັນຄວາມສະໝັກໃຈ ແລະ ເປັນຜົວໜຶ່ງເມຍດຽວ;
4. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ;
5. ຮັບປະກັນສິດ, ຜົນປະໂຫຍດ ແລະ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ;
6. ຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
7. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ

### ມາດຕາ 5 ລະບຽບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ

ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ ຢູ່ ສປປ ລາວ ໃຫ້ປະຕິບັດຕາມປະມວນກົດໝາຍແພ່ງ ແລະ ດໍາລັດສະບັບນີ້.

ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ ຢູ່ຕ່າງປະເທດ ສາມາດປະຕິບັດຕາມກົດໝາຍຂອງປະເທດທີ່ບ່າວສາວອາໄສຢູ່ ໂດຍສອດຄ່ອງກັບກົດໝາຍ ສປປ ລາວ ແລະ ໄດ້ຜ່ານການຢັ້ງຢືນຈາກກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແລະ ສໍານັກງານຜູ້ຕາງໜ້າ ສປປ ລາວ ປະຈໍາຢູ່ຕ່າງປະເທດ.

ການແຕ່ງດອງລະຫວ່າງ ພົນລະເມືອງລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ ກັບ ຄົນຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍຂອງປະເທດທີ່ອາໄສຢູ່ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກສໍານັກງານຜູ້ຕາງໜ້າ ສປປ ລາວ ປະຈໍາຢູ່ຕ່າງປະເທດ.

**ມາດຕາ 6 ເອກະສານປະກອບການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ**

ເອກະສານປະກອບການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ ມີດັ່ງນີ້:

ກ. <u>ສໍາລັບພົນລະເມືອງລາວ</u>

| | | | |
|---|---|---|---|
| 1. | ຄໍາຮ້ອງຂໍແຕ່ງດອງ | (ຕາມແບບພິມ ຂອງຂະແໜງການ ປກສ) | 1 ສະບັບ; |
| 2. | ໃບຢັ້ງຢືນສະຖານະພາບຂອງບຸກຄົນ | (ຕາມແບບພິມ ຂອງຂະແໜງການພາຍໃນ) | 1 ສະບັບ; |
| 3. | ຊີວະປະຫວັດຫຍໍ້ | (ຕາມແບບພິມ ຂອງຂະແໜງການພາຍໃນ) | 1 ສະບັບ; |
| 4. | ບົດບັນທຶກການສູ່ຂໍ | (ຕາມແບບພິມ ຂອງຂະແໜງການພາຍໃນ) | 1 ສະບັບ; |
| 5. | ໃບແຈ້ງໂທດ | (ຈາກສານປະຊາຊົນ ບໍ່ເກີນ 3 ເດືອນ) | 1 ສະບັບ; |
| 6. | ໃບຢັ້ງຢືນສຸຂະພາບ | (ບໍ່ເກີນ 3 ເດືອນ) | 1 ສະບັບ; |
| 7. | ໃບຢັ້ງຢືນການເກີດ | (ຈາກຂະແໜງການພາຍໃນ) | 1 ສະບັບ; |
| 8. | ສໍາເນົາສໍາມະໂນຄົວ ຫຼື ສໍາເນົາບັດປະຈໍາຕົວ | | 1 ສະບັບ; |
| 9. | ໃບຢັ້ງຢືນເຫັນດີຈາກການຈັດຕັ້ງທີ່ຜູ້ກ່ຽວສັງກັດ (ສໍາລັບພະນັກງານ-ລັດຖະກອນ) | | 1 ສະບັບ; |
| 10. | ຮູບຂະໜາດ 3X4 ຊັງຕີແມັດ | (ບໍ່ເກີນ 3 ເດືອນ) | 6 ໃບ. |

ຂ. <u>ສໍາລັບຄົນຕ່າງປະເທດ</u>

| | | | |
|---|---|---|---|
| 1. | ຄໍາຮ້ອງຂໍແຕ່ງດອງ | | 1 ສະບັບ; |
| 2. | ຊີວະປະຫວັດຫຍໍ້ | | 1 ສະບັບ; |
| 3. | ໃບຢັ້ງຢືນທີ່ຢູ່ | | 1 ສະບັບ; |
| 4. | ໃບຢັ້ງຢືນສະຖານະພາບຂອງບຸກຄົນ | (ຈາກປະເທດຜູ້ກ່ຽວ) | 1 ສະບັບ; |
| 5. | ໃບຢັ້ງຢືນຖານະເສດຖະກິດ | | 1 ສະບັບ; |
| 6. | ໃບແຈ້ງໂທດ | (ຈາກປະເທດຜູ້ກ່ຽວ) | 1 ສະບັບ; |
| 7. | ໃບຢັ້ງຢືນສຸຂະພາບ | | 1 ສະບັບ; |
| 8. | ສໍາເນົາໜັງສືຜ່ານແດນ | | 1 ສະບັບ; |
| 9. | ຮູບຂະໜາດ 3X4 ຊັງຕີແມັດ | (ບໍ່ເກີນ 3 ເດືອນ) | 6 ໃບ; |

10. ຄໍາເຫັນຂອງສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນຂອງປະເທດຜູ້ຮ້ອງຂໍ;
11. ໃບຮັບປະກັນໃຫ້ຄູ່ສົມລົດຄົນລາວກັບຄືນປະເທດ ຕາມຈຸດປະສົງຂອງຜູ້ກ່ຽວ ໃນກໍລະນີທີ່ມີການຢ່າຮ້າງ.

ທຸກເອກະສານຂອງຄົນຕ່າງປະເທດ ທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ເອກະສານສະບັບສໍາເນົາ ຕ້ອງມີການຢັ້ງຢືນຄວາມຖືກຕ້ອງຕາມສະບັບເດີມຈາກ ທະບຽນສານ.

**ມາດຕາ 7 ການຍື່ນຄໍາຮ້ອງການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ**

ຜູ້ທີ່ມີຈຸດປະສົງຂໍອະນຸມັດການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ ຢູ່ ສປປ ລາວ ໃຫ້ຍື່ນສໍານວນຄໍາຮ້ອງຜ່ານກົມກົງສຸນ ກະຊວງການຕ່າງປະເທດ ເພື່ອຢັ້ງຢືນທາງກົງສຸນ, ໜ່ວຍງານຄຸ້ມຄອງຄົນຕ່າງປະເທດ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ, ພະແນກຄຸ້ມຄອງຄົນຕ່າງປະເທດ ກອງບັນຊາ

ການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລ້ວຍື່ນຕໍ່ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ກະຊວງປ້ອງກັນຄວາມສະຫງົບ ເພື່ອຄົ້ນຄວ້າ, ສຳພາດ ແລະ ພິຈາລະນາ.

ຜູ້ທີ່ມີຈຸດປະສົງຂໍອະນຸມັດການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດຢູ່ ຕ່າງປະເທດ ໃຫ້ຍື່ນສຳນວນຄຳຮ້ອງ ຜ່ານໜ່ວຍງານຄຸ້ມຄອງຄົນຕ່າງປະເທດ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ, ພະແນກຄຸ້ມຄອງຄົນຕ່າງປະເທດ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລ້ວຍື່ນຕໍ່ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ກະຊວງປ້ອງກັນຄວາມສະຫງົບ ເພື່ອຄົ້ນຄວ້າ, ສຳພາດ ແລະ ພິຈາລະນາ ແລ້ວຍື່ນຕໍ່ກົມກົງສຸນ ກະຊວງການຕ່າງປະເທດ ເພື່ອຢັ້ງຢືນທາງກົງສຸນ.

### ມາດຕາ 8 ການພິຈາລະນາການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ

ກົມກົງສຸນ ກະຊວງການຕ່າງປະເທດ ເມື່ອໄດ້ຮັບສຳນວນຄຳຮ້ອງ ຕ້ອງກວດກາ ແລະ ຢັ້ງຢືນທາງກົງສຸນ ພາຍໃນກຳນົດເວລາ ສາມ ວັນລັດຖະການ;

ໜ່ວຍງານຄຸ້ມຄອງຄົນຕ່າງປະເທດ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ເມື່ອໄດ້ຮັບສຳນວນຄຳຮ້ອງ ຕ້ອງກວດກາ, ຄົ້ນຄວ້າ ແລະ ມີຄຳເຫັນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ;

ພະແນກຄຸ້ມຄອງຄົນຕ່າງປະເທດ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເມື່ອໄດ້ຮັບສຳນວນຄຳຮ້ອງ ຕ້ອງກວດກາ, ຄົ້ນຄວ້າ ແລະ ມີຄຳເຫັນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ;

ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ກະຊວງປ້ອງກັນຄວາມສະຫງົບ ເມື່ອໄດ້ຮັບສຳນວນຄຳຮ້ອງ ຕ້ອງຄົ້ນຄວ້າ ແລະ ສຳພາດ ແລ້ວນຳສະເໜີຂັ້ນເທິງອະນຸມັດ ພາຍໃນກຳນົດເວລາ ຊາວ ວັນ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ, ຄົບຖ້ວນ;

ໃນກໍລະນີເອກະສານບໍ່ຖືກຕ້ອງ, ຄົບຖ້ວນ ຫຼື ບໍ່ສາມາດອະນຸມັດຕາມການຮ້ອງຂໍ ຕ້ອງແຈ້ງເຫດຜົນໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ.

### ມາດຕາ 9 ການຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ

ພາຍຫຼັງໄດ້ຮັບການອະນຸມັດຈາກ ກະຊວງປ້ອງກັນຄວາມສະຫງົບ ແລ້ວ ໃຫ້ຜູ້ຮ້ອງຂໍໄປຈົດທະບຽນການແຕ່ງດອງນຳ ພະແນກພາຍໃນ ຂັ້ນແຂວງ ພາຍໃນກຳນົດເວລາ ສາມ ເດືອນ, ຖ້າກາຍກຳນົດເວລາດັ່ງກ່າວຖືວ່າເປັນການສະລະສິດ.

ພະແນກພາຍໃນ ຂັ້ນແຂວງ ຫຼື ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ຕ້ອງຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງດອງ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

## ໝວດທີ 3
## ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ

### ມາດຕາ 10 ລະບຽບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ

ການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ໃຫ້ປະຕິບັດຕາມປະມວນກົດໝາຍແພ່ງ ແລະ ດຳລັດສະບັບນີ້.

ມາດຕາ 11 ເອກະສານປະກອບການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ

ກ. ເອກະສານປະກອບການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ

<u>ສໍາລັບພົນລະເມືອງລາວ</u>

1. ຄໍາຮ້ອງຂໍແຕ່ງດອງ (ຕາມແບບພິມ ຂອງຂະແໜງການ ປກສ) 1 ສະບັບ;
2. ໃບຢັ້ງຢືນສະຖານະພາບຂອງບຸກຄົນ (ຕາມແບບພິມ ຂອງຂະແໜງການພາຍໃນ) 1 ສະບັບ;
3. ປຶ້ມບັນທຶກການສູ່ຂໍ (ຕາມແບບພິມ ຂອງຂະແໜງການພາຍໃນ) 1 ສະບັບ;
4. ໃບແຈ້ງໂທດ (ຈາກສານປະຊາຊົນ ບໍ່ເກີນ 3 ເດືອນ) 1 ສະບັບ;
5. ໃບຢັ້ງຢືນສຸຂະພາບ (ບໍ່ເກີນ 3 ເດືອນ) 1 ສະບັບ;
6. ໃບຢັ້ງຢືນການເກີດ (ຈາກຂະແໜງການພາຍໃນ) 1 ສະບັບ;
7. ສໍາເນົາສໍາມະໂນຄົວ ຫຼື ສໍາເນົາບັດປະຈໍາຕົວ ຫຼື ໜັງສືຜ່ານແດນ 1 ສະບັບ;
8. ໃບຢັ້ງຢືນເຫັນດີຈາກການຈັດຕັ້ງທີ່ຜູ້ກ່ຽວສັງກັດ (ສໍາລັບພະນັກງານ-ລັດຖະກອນ) 1 ສະບັບ;
9. ຮູບຂະໜາດ 3X4 ຊັງຕີແມັດ (ບໍ່ເກີນ 3 ເດືອນ) 6 ໃບ.

<u>ສໍາລັບຄົນຕ່າງດ້າວ</u>

1. ຄໍາຮ້ອງຂໍແຕ່ງດອງ (ຕາມແບບພິມ ຂອງຂະແໜງການ ປກສ) 1 ສະບັບ;
2. ໃບຢັ້ງຢືນສະຖານະພາບຂອງບຸກຄົນ (ຈາກສະຖານທູດປະເທດຜູ້ກ່ຽວ) 1 ສະບັບ;
3. ໃບແຈ້ງໂທດ (ບໍ່ເກີນ 3 ເດືອນ) 1 ສະບັບ;
4. ໃບຢັ້ງຢືນສຸຂະພາບ (ບໍ່ເກີນ 3 ເດືອນ) 1 ສະບັບ;
5. ສໍາເນົາໜັງສືຜ່ານແດນ, ສໍາມະໂນຄົວຕ່າງດ້າວ, ບັດປະຈໍາຕົວຕ່າງດ້າວ 1 ສະບັບ;
6. ຮູບຂະໜາດ 3X4 ຊັງຕີແມັດ (ບໍ່ເກີນ 3 ເດືອນ) 6 ໃບ.
7. ຄໍາເຫັນຂອງສະຖານທູດ ຫຼື ສະຖານກົງສຸນຂອງປະເທດຜູ້ຮ້ອງຂໍ.

ຂ. ເອກະສານປະກອບການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນບໍ່ມີສັນຊາດ

<u>ສໍາລັບພົນລະເມືອງລາວ</u>

1. ຄໍາຮ້ອງຂໍແຕ່ງດອງ (ຕາມແບບພິມ ຂອງຂະແໜງການ ປກສ) 1 ສະບັບ;
2. ໃບຢັ້ງຢືນສະຖານະພາບຂອງບຸກຄົນ (ຕາມແບບພິມ ຂອງຂະແໜງການພາຍໃນ) 1 ສະບັບ;
3. ປຶ້ມບັນທຶກການສູ່ຂໍ (ຕາມແບບພິມ ຂອງຂະແໜງການພາຍໃນ) 1 ສະບັບ;
4. ໃບແຈ້ງໂທດ (ຈາກສານປະຊາຊົນ ບໍ່ເກີນ 3 ເດືອນ) 1 ສະບັບ;
5. ໃບຢັ້ງຢືນສຸຂະພາບ (ບໍ່ເກີນ 3 ເດືອນ) 1 ສະບັບ;
6. ໃບຢັ້ງຢືນການເກີດ (ຈາກຂະແໜງການພາຍໃນ) 1 ສະບັບ;
7. ສໍາເນົາສໍາມະໂນຄົວ ຫຼື ສໍາເນົາບັດປະຈໍາຕົວ ຫຼື ໜັງສືຜ່ານແດນ 1 ສະບັບ;
8. ໃບຢັ້ງຢືນເຫັນດີຈາກການຈັດຕັ້ງທີ່ຜູ້ກ່ຽວສັງກັດ (ສໍາລັບພະນັກງານ-ລັດຖະກອນ) 1 ສະບັບ;
9. ຮູບຂະໜາດ 3X4 ຊັງຕີແມັດ (ບໍ່ເກີນ 3 ເດືອນ) 6 ໃບ.

**ສຳລັບຄົນບໍ່ມີສັນຊາດ**

1. ຄຳຮ້ອງຂໍແຕ່ງດອງ (ຕາມແບບພິມ ຂອງຂະແໜງການ ປກສ) 1 ສະບັບ;
2. ໃບຢັ້ງຢືນສະຖານະພາບຂອງບຸກຄົນ 1 ສະບັບ;
3. ໃບແຈ້ງໂທດ (ຈາກສານປະຊາຊົນ ບໍ່ເກີນ 3 ເດືອນ) 1 ສະບັບ;
4. ໃບຢັ້ງຢືນສຸຂະພາບ (ບໍ່ເກີນ 3 ເດືອນ) 1 ສະບັບ;
5. ສຳເນົາເອກະສານຢັ້ງຢືນຄົນບໍ່ມີສັນຊາດທີ່ອາໄສຢູ່ດິນແດນຂອງ ສປປ ລາວ 1 ສະບັບ;
6. ຮູບຂະໜາດ 3X4 ຊັງຕີແມັດ (ບໍ່ເກີນ 3 ເດືອນ) 6 ໃບ.

**ມາດຕາ 12 ການຍື່ນຄຳຮ້ອງການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ**

ຜູ້ທີ່ມີຈຸດປະສົງຂໍແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຢູ່ ສປປ ລາວ ໃຫ້ຍື່ນສຳນວນຄຳຮ້ອງຕໍ່ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນ ພາຍໃນກຳນົດເວລາ ສາມ ວັນ ລັດຖະການ ແລ້ວນຳສະເໜີຕໍ່ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ.

**ມາດຕາ 13 ການພິຈາລະນາການຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ**

ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເມື່ອໄດ້ຮັບສຳນວນຄຳຮ້ອງ ຕ້ອງຄົ້ນຄວ້າ, ພິຈາລະນາ ແລະ ອະນຸມັດ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

ໃນກໍລະນີເອກະສານບໍ່ຖືກຕ້ອງ, ຄົບຖ້ວນ ຫຼື ບໍ່ສາມາດອະນຸມັດຕາມການຮ້ອງຂໍ ຕ້ອງແຈ້ງເຫດຜົນໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ.

**ມາດຕາ 14 ການຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ**

ພາຍຫຼັງໄດ້ຮັບການອະນຸມັດຈາກກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລ້ວ ໃຫ້ຜູ້ຮ້ອງຂໍໄປຈົດທະບຽນການແຕ່ງດອງນຳພະແນກພາຍໃນ ຂັ້ນແຂວງ.

ພະແນກພາຍໃນ ຂັ້ນແຂວງ ຕ້ອງຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງດອງ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງຂອງລັດ**

ຫ້າມພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;
2. ນຳໃຊ້ ສິດ ແລະ ໜ້າທີ່ ເກີນຂອບເຂດທີ່ກົດໝາຍກຳນົດ;
3. ຖ່ວງດຶງ ແລະ ແກ່ຍາວເວລາການດຳເນີນເອກະສານ;

4. ຮັບ, ທວງເອົາ ຫຼື ຂໍເອົາສິນບົນ;

5. ເກັບຄ່າທຳນຽມ ຫຼື ຄ່າບໍລິການ ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້;

6. ໃຊ້ກິລິຍາມາລະຍາດທີ່ບໍ່ເໝາະສົມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ຮ້ອງຂໍ**

ຫ້າມຜູ້ຮ້ອງຂໍມີພຶດຕິກຳ ດັ່ງນີ້:

1. ສະໜອງເອກະສານ ຫຼື ຂໍ້ມູນ ທີ່ບໍ່ຖືກຕ້ອງຕາມຄວາມຈິງ;
2. ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ;
3. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຕົວະຍົວະ, ຫຼອກລວງເຈົ້າໜ້າທີ່, ພະນັກງານ-ລັດຖະກອນ;
4. ແຕ່ງດອງໂດຍບໍ່ໄດ້ຮັບອະນຸຍາດ, ແຕ່ງດອງແອບແຝງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 17 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການຮ່ວມມື, ຂັດຂວາງ ການປະຕິບັດໜ້າທີ່ ຂອງ ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ;
2. ຊອກຫາ, ຂົນຂວາຍ, ຂົນສົ່ງ ຫຼື ນຳສົ່ງ, ນາບຂູ່, ຂົ່ມເຫັງ, ບັງຄັບ, ໃຊ້ກຳລັງ, ສວຍໃຊ້ອຳນາດ, ຊື້ຈ້າງ, ຈອບອອຍ, ຕົວະຍົວະຫຼອກລວງ, ຍຸຍົງ, ແນະນຳ, ຊ່ວຍເຫຼືອ ຫຼື ອຳນວຍຄວາມສະດວກແກ່ບຸກຄົນອື່ນ ແຕ່ງດອງບໍ່ຖືກຕ້ອງ ແລະ ບໍ່ໄປຈົດທະບຽນການແຕ່ງດອງຕາມກົດໝາຍ;
3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ ແກ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ;
4. ສົມຮູ້ຮ່ວມຄິດໃນການປອມແປງເອກະສານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ກ່ຽວກັບການຈົດທະບຽນການແຕ່ງດອງ;
5. ໂຄສະນາ, ຊັກຊວນດ້ວຍທຸກຮູບແບບເພື່ອຈຸດປະສົງຄ້າມະນຸດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 18 ອົງການຄຸ້ມຄອງ ແລະ ກວດກາ**

ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ ຄຸ້ມຄອງ ແລະ ກວດກາ ວຽກງານການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ໂດຍກົງ ທັງເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ປະກອບດ້ວຍ:

1. ຂະແໜງການພາຍໃນ;
2. ຂະແໜງການປ້ອງກັນຄວາມສະຫງົບ;
3. ຂະແໜງການການຕ່າງປະເທດ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງຂະແໜງການພາຍໃນ**

ຂະແໜງການພາຍໃນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເປັນແຜນການ, ແຜນງານ, ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
4. ຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
5. ຄຸ້ມຄອງ, ຊີ້ນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
6. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ແຈ້ງການ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
8. ສະຫຼຸບລາຍງານວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເປັນແຜນການ, ແຜນງານ, ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
4. ຄົ້ນຄວ້າ, ສຳພາດ ແລະ ອະນຸມັດການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
5. ຄຸ້ມຄອງ, ຊີ້ນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
6. ກຳນົດແບບພິມຄຳຮ້ອງຂໍແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
7. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ແຈ້ງການ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
9. ສະຫຼຸບລາຍງານວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຂະແໜງການການຕ່າງປະເທດ**

ຂະແໜງການ ການຕ່າງປະເທດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
3. ຢັ້ງຢືນເອກະສານທາງກົງສຸນ ທີ່ອອກໃຫ້ໂດຍອົງການທີ່ກ່ຽວຂ້ອງ ຢູ່ ສປປ ລາວ ທີ່ມີຈຸດປະສົງຈະເອົາໄປນຳໃຊ້ຢູ່ຕ່າງປະເທດ ແລະ ຢັ້ງຢືນເອກະສານທີ່ອອກໃຫ້ໂດຍອົງການທີ່ກ່ຽວຂ້ອງຢູ່ ຕ່າງປະເທດ ທີ່ມີຈຸດປະສົງຈະເອົາມານຳໃຊ້ ຢູ່ ສປປ ລາວ;
4. ຈົດທະບຽນ ແລະ ອອກໃບຢັ້ງຢືນການແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ ທີ່ຢູ່ຕ່າງປະເທດ;
5. ຄຸ້ມຄອງ, ຊີ້ນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
6. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ແຈ້ງການ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;

8. ສະຫຼຸບລາຍງານວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການປະສານສົມທົບ ແລະ ຮ່ວມມືກັບຂະແໜງການພາຍໃນ, ຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການການຕ່າງປະເທດ ຕາມພາລະບົດບາດຂອງຕົນ ໃນການຄຸ້ມຄອງວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ

**ມາດຕາ 23 ເນື້ອໃນການກວດກາ**

ການກວດກາວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;
2. ກວດກາການຈັດຕັ້ງປະຕິບັດໜ້າທີ່, ການປະພຶດ ແລະ ແບບແຜນວິທີເຮັດວຽກ ຂອງພະນັກງານຜູ້ທີ່ຮັບຜິດຊອບວຽກງານແຕ່ງດອງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ.

**ມາດຕາ 24 ຮູບການການກວດກາ**

ການກວດກາມີ ສາມ ຮູບການດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດການອກແຜນການທີ່ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການໃຫ້ຄວາມຮ່ວມມື, ການລາຍງານ ຫຼື ການສະໜອງຂໍ້ມູນກ່ຽວກັບພຶດຕິກຳ ຫຼື ການເຄື່ອນໄຫວວຽກງານຕົວຈິງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 26  ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 27  ການຈັດຕັ້ງປະຕິບັດ**

ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 28  ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ ສະບັບເລກທີ 198/ນຍ, ລົງວັນທີ 19 ທັນວາ 1994.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ